ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ເລກທີ ໐5 /ຖວ

ນະຄອນຫລວງວຽງຈັນ, ວັນທີ 24 / 1 / 2010

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

## ວ່າດ້ວຍການຄຸ້ມຄອງ ການບໍລິການແປພາສາ

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ກວດກາ, ການເຄື່ອນໄຫວວຽກງານບໍລິການແປພາສາ ເພື່ອໃຫ້ບໍລິສັດບໍລິການ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະລະ ໄດ້ດຳເນີນຢ່າງມີປະສິດທິພາບ, ວ່ອງໄວ ແລະ ທັນການ, ສ້າງເງື່ອນໄຂສະດວກໃຫ້ແກ່ອົງການຄຸ້ມຄອງການພິມຈຳໜ່າຍແຕ່ລະຂັ້ນ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ແນໃສ່ເປີດກວ້າງການບໍລິການແປພາສາ ໂດຍໃຫ້ຫລາຍພາກສ່ວນເສດຖະກິດ ທັງພາກລັດ ແລະ ເອກະຊົນ ສາມາດເຂົ້າຮ່ວມ, ອຳນວຍຄວາມສະດວກໃຫ້ແກ່ສັງຄົມ ໃນການພົວພັນກັບການບໍລິການແປພາສາ, ປະກອບສ່ວນເຂົ້າໃນການພັດທະນາ ການບໍລິການ ແປພາສາ ໃຫ້ຖືກຕ້ອງ ແລະ ມີຄຸນນະພາບສູງຂຶ້ນ.

ຂໍ້ຕົກລົງສະບັບນີ້ ຍັງມີຈຸດປະສົງ:

1. ເຮັດໃຫ້ທຸກຄົນ ແລະ ທຸກພາກສ່ວນທີ່ພົວພັນກັບວຽກງານບໍລິການແປພາສາ ຮັບຮູ້, ເຂົ້າໃຈ ແລ້ວປະຕິບັດ ໃຫ້ຖືກຕ້ອງຕາມລະບຽບການ;
2. ເຮັດໃຫ້ວຽກງານບໍລິການແປພາສາ ສາມາດລະໜອງ ເອກະສານ (ບົດແປ) ທີ່ຖືກຕ້ອງ ແລະ ຮັບໃຊ້ສັງຄົມຢ່າງເປັນປົກກະຕິ ທັງສ້າງເງື່ອນໄຂທີ່ດີໃຫ້ການບໍລິການແປພາສາໄດ້ພັດທະນາໜັງສືລາວ ຫລື ພາສາລາວຢ່າງເປັນເອກະພາບ ແລະ ກວ້າງຂວາງກວ່າ ເກົ່າ;
3. ໃຫ້ເປັນບ່ອນອີງແກ່ອົງການຄຸ້ມຄອງການພິມຈຳໜ່າຍແຕ່ລະຂັ້ນ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ;
4. ໃຫ້ທຸກຄົນ ແລະ ທຸກພາກສ່ວນ ໃນການບໍລິການແປພາສາ ໄດ້ດຳເນີນ ຕາມກົນໄກເສດຖະກິດຕະຫລາດ ທີ່ມີການຄຸ້ມຄອງຂອງລັດ.

## ມາດຕາ 2. ການບໍລິການແປພາສາ

ການບໍລິການແປພາສາ ແມ່ນ ການຮັບໃຊ້ຂອງບໍລິສັດບໍລິການ, ໜ່ວຍງານແປພາສາ ຫຼື ນັກບໍລິການແປພາສາອິດສະລະ ຊຶ່ງຕ້ອງແປພາສາໜຶ່ງໄປສູ່ພາສາອື່ນ ດ້ວຍການເວົ້າ, ການຂຽນ ຫລື ການພິມໃຫ້ຖືກຕ້ອງ ແລະ ຜູ້ໃຊ້ບໍລິການ ຕ້ອງຈ່າຍຄ່າບໍລິການແປພາສານັ້ນ ຕາມລາຄາທີ່ໄດ້ຕົກລົງກັນ ຫລື ລະບຽບການຂອງລັດ ຖ້າຫາກມີ.

## ມາດຕາ 3. ການອະທິບາຍຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ບໍລິການແປພາສາ ໝາຍເຖິງ ບໍລິສັດບໍລິການແປພາສາ, ໜ່ວຍງານແປພາສາ ຫລື ນັກບໍລິການແປພາສາອິດສະລະ ຊຶ່ງສາມາດແປເອກະສານ ຫລື ການປາກເວົ້າ ຈາກພາສາໜຶ່ງໄປສູ່ພາສາອື່ນ;
2. ບໍລິສັດບໍລິການແປພາສາ ໝາຍເຖິງ ຫົວໜ່ວຍທຸລະກິດ ບໍລິການແປພາສາໃຫ້ທຸກຄົນໃນສັງຄົມດ້ວຍການຈັດຕັ້ງເປັນບໍລິສັດ ທີ່ມີ ສຳນັກງານ, ມີພະນັກງານ ຢ່າງໜ້ອຍ ສາມ ຄົນຂຶ້ນໄປ ແລະ ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງ;
3. ໜ່ວຍງານແປພາສາ ໝາຍເຖິງ ກຸ່ມຄົນໜຶ່ງ (ນັບແຕ່ສອງຄົນຂຶ້ນໄປ) ຊຶ່ງເປັນຝ່າຍຮັບເຮັດວຽກແປພາສາໃຫ້ຜູ້ໃດໜຶ່ງ ຫລື ພາກສ່ວນໃດໜຶ່ງ ດ້ວຍການໄດ້ຮັບຄ່າແຮງງານຕອບແທນ ຕາມການຕົກລົງເຫັນດີນຳກັນ ຫລື ຕາມລະບຽບການຂອງລັດ ;
4. ນັກບໍລິການແປພາສາອິດສະລະ ໝາຍເຖິງ ບຸກຄົນ ທີ່ມີຄວາມສາມາດບໍລິການແປພາສາ ໃຫ້ຄົນອື່ນ ເຂົ້າໃຈຢ່າງຖືກຕ້ອງ ຊຶ່ງເຮັດເປັນອາຊີບເສີມ ທີ່ສາມາດໄດ້ຮັບຄ່າຕອບແທນ;
5. ການບໍລິການແປພາສາຕາມເອກະສານ ໝາຍເຖິງ ການແປພາສາທີ່ຕ້ອງໄດ້ຂຽນ ຫລື ພິມຈຳໜ່າຍ ເພື່ອຈຸດປະສົງ ໂຄສະນາເຜີຍແຜ່ ດ້ວຍຮູບການແຈກຢາຍລ້າ ແລະ ຂາຍ;
6. ການບໍລິການແປພາສາຕາມການປາກເວົ້າ ໝາຍເຖິງ ການບໍລິການແປພາສາທີ່ບໍ່ໄດ້ຂຽນ ຫລື ພິມພຽງແຕ່ບັນທຶກເລັກໜ້ອຍ ເພື່ອຄວາມຊົງຈຳໃນເວລາແປເທົ່ານັ້ນ.

## ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບ ການບໍລິການແປພາສາ

ລັດ ສົ່ງເສີມ ແລະ ພັດທະນາວຽກງານບໍລິການແປພາສາໃຫ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ຊຸກຍູ້ວຽກງານບໍລິການແປພາສາຂອງບໍລິສັດບໍລິການແປພາສາ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະລະ ເພື່ອເຮັດໃຫ້ການແປພາສາ ກາຍເປັນຂະແໜງງານໜຶ່ງທີ່ປະກອບສ່ວນສົ່ງເສີມການອ່ານ, ຊ່ວຍສະໜອງຂໍ້ມູນ ຄວາມຮູ້ຈາກການອ່ານປຶ້ມ ມາພັດທະນາຄວາມຮູ້ ຄວາມກ້າວໜ້າຂອງປະຊາຊົນລາວບັນດາເຜົ່າ.

ລັດ ພັດທະນາການບໍລິການແປພາສາ ຕິດພັນກັບການຈັດພິມ, ການພິມ, ການຈຳໜ່າຍ ແລະ ການສົ່ງເສີມການອ່ານ ຢ່າງກວ້າງຂວາງ ດ້ວຍການປະຕິບັດນະໂຍບາຍດ້ານຕ່າງໆ ເຊັ່ນ: ການສ້າງ ແລະ ປະກອບບຸກຄະລາກອນ, ການສະໜອງງົບປະມານ, ສິນເຊື່ອ, ພາຫະນະ, ວັດຖຸ ອຸປະກອນເຕັກນິກ, ເຕັກໂນໂລຢີທີ່ທັນສະໄໝ, ການຫລຸດຜ່ອນ ຫລື ຍົກເວັ້ນພາສີອາກອນ ຕາມລະບຽບກົດໝາຍ.

ລັດ ຊຸກຍູ້ໃຫ້ການຈັດຕັ້ງ, ບຸກຄົນທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນເຂົ້າໃນການພັດທະນາ ການບໍລິການແປພາສາ ດ້ວຍການສະໜອງພາຫະນະ, ວັດຖຸອຸປະກອນ, ທຶນຮອນ ແລະ ອື່ນໆ ໃຫ້ແກ່ວຽກງານບໍລິການ ແລະ ຄຸ້ມຄອງການບໍລິການແປພາສາ.

**ມາດຕາ 5. ຫລັກການ ການບໍລິການແປພາສາ**

ຫລັກການ ການບໍລິການແປພາສາ ມີ ດັ່ງນີ້ :

1. ການບໍລິການແປພາສາ ຕ້ອງເປັນປະໂຫຍດໃນການພັດທະນາ, ສະໜອງ ສາລະຄວາມຮູ້, ສາລະບັນເທີງ ທີ່ມີຄວາມຖືກຕ້ອງຕາມ ນະໂຍບາຍ, ລະບຽບກົດໝາຍ ແລະ ວັດທະນະທຳ ຮີດຄອງອັນດີງາມຂອງຊາດ ທັງສອດຄ່ອງກັບກົນໄກເສດຖະກິດຕະຫລາດ;
2. ການບໍລິການແປພາສາ ຕ້ອງຜ່ານການບັນນາທິການ ແລະ ການຈັດພິມຢ່າງຖືກຕ້ອງ ຖ້າຫາກປຶດແປນັ້ນ ຈະພິມ ເພື່ອໂຄສະນາເຜີຍແຜ່ ຫລື ຈຳໜ່າຍ ;
3. ການບໍລິການແປປຶດທີ່ກ່ຽວກັບນິຕິກຳ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຂອງປຶດແປນັ້ນ ຢູ່ອົງການຈັດຕັ້ງປະຕິບັດວຽກງານທະບຽນສານ;
4. ການບໍລິການແປ ປຶດວັນນະກຳ, ປຶດຄວາມຮູ້ວິຊາການດ້ານຕ່າງໆ, ປຶດກ່ຽວກັບການເມືອງ, ປະຫວັດສາດ, ວັດທະນະທຳ ແລະ ອື່ນໆ ຕ້ອງໄດ້ຮັບການຢັ້ງຢືນເນື້ອໃນຈາກສຳນັກພິມຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອກວດແກ້ ແລະ ຢັ້ງຢືນເນື້ອໃນປຶດແປ ພ້ອມທັງຈົດທະບຽນພິມຈຳໜ່າຍ.

## ໝວດທີ 2

## ປະເພດການບໍລິການແປພາສາ

**ມາດຕາ 6. ປະເພດ ການບໍລິການແປພາສາ**

ການບໍລິການ ແປພາສາ ມີ ສາມ ປະເພດ ດັ່ງນີ້:

1. ບໍລິສັດ ບໍລິການແປພາສາ ;
2. ໜ່ວຍງານ ແປພາສາ ;
3. ນັກບໍລິການ ແປພາສາ ອິດສະລະ.

**ມາດຕາ 7. ບໍລິສັດບໍລິການແປພາສາ**

ບໍລິສັດ ບໍລິການແປພາສາ ມີ ດັ່ງນີ້ :

- ບໍລິສັດບໍລິການແປພາສາ ເອກະຊົນພາຍໃນ ລົງທຶນຮ້ອຍສ່ວນຮ້ອຍ;
- ບໍລິສັດບໍລິການແປພາສາເອກະຊົນພາຍໃນ ຫຸ້ນສ່ວນກັບຕ່າງປະເທດ;
- ສາຂາບໍລິສັດບໍລິການແປພາສາ ຕົວຢ່າງ: ບໍລິສັດບໍລິການແປພາສາ ທີດີເອັດ ມີບໍລິສັດແມ່ຢູ່ນະຄອນຫລວງວຽງຈັນ ແຕ່ມີສາຂາ ຢູ່ແຂວງສະຫວັນນະເຂດ ແລະ ຢູ່ເມືອງຊະນະຄາມ.

ມາດຕາ 8. ໜ່ວຍງານແປພາສາ

ໜ່ວຍງານແປພາສາ ສັງກັດ ຢູ່ສຳນັກງານອົງການຂອງລັດ ເຊັ່ນ: ໜ່ວຍງານບໍລິການແປພາສາ ປະຈຳ ກະຊວງ, ອົງການ ຫລື ບໍລິສັດລັດວິສາຫະກິດໃດໜຶ່ງ,...

ໜ່ວຍງານແປພາສາ ອາດຈະສ້າງຂື້ນ ໃນຮູບການ " ຄະນະກຳມະການ ຫລື ອະນຸກຳມະການບໍລິການ ແປພາສາ " ກໍໄດ້.

ມາດຕາ 9. ນັກບໍລິການແປພາສາອິດສະລະ

ນັກບໍລິການແປພາສາອິດສະລະ ສັງກັດຢູ່ອົງການຈັດຕັ້ງຂອງພັກ - ລັດ, ຢູ່ໃນແຕ່ລະຂະແໜງການ ແລະ ແຕ່ລະທ້ອງຖິ່ນ. ນັກບໍລິການແປພາສາອິດສະລະ ດຳເນີນໃນຮູບການເສດຖະກິດ ສ່ວນຕົວແບບຫາລາຍໄດ້ເສີມ ໃຫ້ແກ່ຄອບຄົວ.

## ໝວດທີ 3

## ການອະນຸຍາດ ດຳເນີນການ ບໍລິການແປພາສາ

ມາດຕາ 10. ການອະນຸຍາດໃຫ້ດຳເນີນການບໍລິການ ຂອງ ບໍລິສັດ ບໍລິການແປພາສາ

ຜູ້ມີຈຸດປະສົງສ້າງຕັ້ງບໍລິສັດບໍລິການແປພາສາ ຕ້ອງປະກອບເອກະສານຂໍອະນຸຍາດ ແລະ ຍື່ນຕໍ່ອົງການຄຸ້ມຄອງການພິມຈຳໜ່າຍ ດັ່ງນີ້:

- ໃບຄຳຮ້ອງ ຕາມແບບຮ່າງຂອງອົງການຄຸ້ມຄອງການພິມຈຳໜ່າຍ 1 ສະບັບ;
- ບົດວິພາກເສດຖະກິດ ທີ່ບົ່ງຊື່ຂອງບໍລິສັດ ເປັນພາສາລາວ ແລະ ພາສາ ສາກົນ, ເປົ້າໝາຍ, ພາສາທີ່ສາມາດແປໄດ້, ຈຳນວນບຸກຄະລາກອນປະຈຳ, ທຶນໝູນວຽນ, ຊັບຄົງທີ່, ຜົນໄດ້ ຜົນເສຍ, ແຜນຄາດຄະເນລາຍຮັບ, ລາຍຈ່າຍ, ກຳໄລຕໍ່ເດືອນ, ທີ່ຕັ້ງ, ແຜນວາດ ແນວລະ 1 ສະບັບ ;
- ຊີວະປະຫວັດ, ລະດັບວິຊາການ, ລະດັບພາສາຕ່າງປະເທດ, ໃບຢັ້ງຢືນປະສົບການ ດ້ານອື່ນທີ່ກ່ຽວພັນກັບການແປພາສາ 1 ສະບັບ ;
- ບັນຊີລາຍຊື່ ພ້ອມດ້ວຍຮູບຂອງສະມາຊິກປະຈຳຢູ່ໃນບໍລິສັດບໍລິການແປພາສາ 1 ສະບັບ ;
- ຮູບຂອງຜູ້ຮ້ອງຂໍສ້າງຕັ້ງ ຫລື ຮູບຂອງຫົວໜ້າບໍລິສັດບໍລິການ ແປພາສາ ຂະໜາດ 3x4 ຊມ ຈຳນວນ 2 ແຜ່ນ;
- ໃບຢັ້ງຢືນທີ່ຢູ່ 1 ສະບັບ ;
- ໃບແຈ້ງໂທດ 1 ສະບັບ.

ເມື່ອອົງການຄຸ້ມຄອງການພິມຈຳໜ່າຍ ໄດ້ອອກໃບອະນຸຍາດ ໃຫ້ດຳເນີນການບໍລິການແປພາສາແລ້ວ ກໍຕ້ອງຍື່ນຄຳຮ້ອງຂໍດຳເນີນທຸລະກິດຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ ແລະ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

ມາດຕາ 11. ການອະນຸຍາດໃຫ້ດຳເນີນການບໍລິການຂອງໜ່ວຍງານແປພາສາ

ຜູ້ມີຈຸດປະສົງສ້າງຕັ້ງໜ່ວຍງານແປພາສາ ຕ້ອງປະກອບເອກະສານຂໍອະນຸຍາດ ແລະ ຍື່ນຕໍ່ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນສູນກາງ ດັ່ງນີ້:

- ໃບຄຳຮ້ອງຂອງສຳນັກງານຂະແໜງການທີ່ຕ້ອງການສ້າງຕັ້ງ 1 ສະບັບ;
- ຊື່ຂອງໜ່ວຍງານແປພາສາເປັນພາສາລາວ ແລະ ພາສາສາກົນ;
- ຊີວະປະຫວັດຂອງຫົວໜ້າໜ່ວຍງານແປພາສາ, ລະດັບວິຊາການ ລະດັບພາສາຕ່າງປະເທດ, ໃບຢັ້ງຢືນປະສົບການ ບໍລິການແປພາສາ ແລະ ປະສົບການດ້ານອື່ນ ທີ່ກ່ຽວພັນກັບການແປພາສາ ຢ່າງລະ 1 ສະບັບ;
- ຮູບຂອງຫົວໜ້າໜ່ວຍງານແປພາສາ ຂະໜາດ 3x4 ຊມ ຈຳນວນ 2 ແຜ່ນ;
- ບັນຊີລາຍຊື່ ພ້ອມດ້ວຍຮູບຂອງສະມາຊິກ ທີ່ຮ່ວມຢູ່ໃນໜ່ວຍງານແປພາສາ 1 ສະບັບ;
- ທີ່ຕັ້ງ ແຜນວາດ ຂອງໜ່ວຍງານແປພາສາ 1 ສະບັບ.

ມາດຕາ 12. ການອະນຸຍາດໃຫ້ດຳເນີນການບໍລິການ ຂອງນັກບໍລິການແປພາສາອິດສະລະ

ຜູ້ມີຈຸດປະສົງຕ້ອງການເປັນນັກບໍລິການ ແປພາສາ ອິດສະລະ ຕ້ອງປະກອບເອກະສານຍື່ນຕໍ່ບໍລິສັດ ບໍລິການແປພາສາ ທີ່ກ່ຽວຂ້ອງ ດັ່ງນີ້:

- ຊີວະປະຫວັດຕິດຮູບ, ລະດັບການສຶກສາດ້ານພາສາ, ໃບຢັ້ງຢືນ ຄວາມຮູ້ພາສາຕ່າງປະເທດຢ່າງໜ້ອຍ 1 ພາສາຂຶ້ນໄປ ແລະ ປະສົບການໃນການບໍລິການ ແປພາສາ;

- ຮູບຂະໜາດ 3 x 4 ຊມ ຈຳນວນ 3 ແຜ່ນ.

ເມື່ອບໍລິສັດບໍລິການແປພາສາຫາກເຫັນດີອະນຸຍາດໃຫ້ເປັນສະມາຊິກ ທີ່ບໍ່ປະຈຳແລ້ວ ກໍສະເໜີຕໍ່ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນເມືອງ ທີ່ນັກບໍລິການແປພາສາອິດສະລະ ດຳລົງຊີວິດຢູ່ ເພື່ອອອກເລກລະຫັດບັດສະມາຊິກໃຫ້ຜູ້ກ່ຽວ ແລະ ອົງການຄຸ້ມຄອງການພິມຈຳໜ່າຍດັ່ງກ່າວ ຕ້ອງລາຍງານສະຖິຕິ ຂໍ້ມູນການບໍລິການແປພາສາ ແລະ ບັນຊີລາຍຊື່ນັກບໍລິການແປພາສາອິດສະລະໃຫ້ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນແຂວງ ຮັບຊາບ ໃນເດືອນ 7 ຂອງແຕ່ລະປີ ແລະ ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນແຂວງ ກໍຕ້ອງລາຍງານສະພາບການແປພາສາຂອງບໍລິສັດບໍລິການແປພາສາ ພ້ອມທັງສະຖິຕິຂໍ້ມູນຂອງການບໍລິການແປພາສາ ໃຫ້ອົງການຄຸ້ມຄອງການພິມຈຳໜ່າຍ ຂັ້ນສູນກາງຊາບ ໃນເດືອນ 8 ຂອງແຕ່ລະປີ.

## ໝວດທີ 4

## ມາດຕະຖານ ຂອງຜູ້ບໍລິການແປພາສາ

ມາດຕາ 13. ມາດຕະຖານ ຂອງຫົວໜ້າບໍລິສັດບໍລິການແປພາສາ

ຫົວໜ້າບໍລິສັດບໍລິການແປພາສາ ມີມາດຕະຖານ ຕົ້ນຕໍ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸ ແຕ່ 25 ປີ ຂຶ້ນໄປ;

2. ເປັນຜູ້ມີຄວາມຮູ້ ຄວາມສາມາດດ້ານການແປພາສາ, ຮຽນຈົບວິຊາການແປພາສາ ຊັ້ນສູງຂຶ້ນໄປ, ມີໃບຢັ້ງຢືນປະສົບການໃນການແປພາສາ;
3. ມີຄວາມຮູ້ດ້ານທິດສະດີການເມືອງ, ກຳແໜ້ນແນວທາງ ແລະ ນະໂຍບາຍຂອງລັດ ;
4. ມີຄວາມສາມາດໃນການບໍລິຫານທຸລະກິດການແປພາສາ;
5. ບໍ່ເຄີຍຖືກສານຕັດສິນລົງໂທດ ຕັດອິດສະລະພາບ ໃນສະຖານການກະທຳຜິດ ໂດຍເຈດຕະນາ;
6. ມີສຸຂະພາບແຂງແຮງ.

ມາດຕາ 14. ມາດຕະຖານ ຂອງຫົວໜ້າໜ່ວຍງານແປພາສາ

ຫົວໜ້າໜ່ວຍງານ ແປພາສາ ມີມາດຕະຖານ ຕົ້ນຕໍ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 25 ປີ ຂຶ້ນໄປ;
2. ເປັນພະນັກງານສັງກັດຢູ່ກະຊວງ, ອົງການທີ່ໜ່ວຍງານແປພາສາຂຶ້ນກັບ;
3. ເປັນຜູ້ມີຄວາມຮູ້ ຄວາມສາມາດ ດ້ານການແປພາສາ, ຮຽນຈົບວິຊາການແປພາສາຊັ້ນສູງຂຶ້ນໄປ, ມີໃບຢັ້ງຢືນປະສົບການໃນການແປພາສາ;
4. ມີຄວາມຮູ້ດ້ານທິດສະດີການເມືອງ;
5. ມີປະສົບການໃນວຽກງານຄຸ້ມຄອງບໍລິຫານ ການແປພາສາ;
6. ມີສຸຂະພາບແຂງແຮງ.

ມາດຕາ 15. ມາດຕະຖານ ຂອງນັກບໍລິການແປພາສາອິດສະລະ

ນັກບໍລິການແປພາສາອິດສະລະ ມີມາດຕະຖານຕົ້ນຕໍ ດັ່ງນີ້:

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 21 ປີຂຶ້ນໄປ ;
2. ເປັນຜູ້ມີຄວາມຮູ້ ຄວາມສາມາດດ້ານການແປພາສາ, ຮຽນຈົບວິຊາການແປພາສາ ຫລືພາສາສາດ ຊັ້ນສູງຂຶ້ນໄປ, ມີໃບຢັ້ງຢືນປະສົບການໃນການແປພາສາ;
3. ມີຄວາມຮູ້ດ້ານທິດສະດີການເມືອງ ;
4. ມີສຸຂະພາບແຂງແຮງ.

## ໝວດທີ 5

## ສິດ ແລະ ໜ້າທີ່ຂອງການບໍລິການແປພາສາ

ມາດຕາ 16. ສິດຂອງບໍລິສັດບໍລິການແປພາສາ

ບໍລິສັດບໍລິການແປພາສາ ມີ ສິດ ດັ່ງນີ້:

1. ຕິດປ້າຍໃສ່ສຳນັກງານບໍລິສັດບໍລິການແປພາສາ ເປັນພາສາລາວ ແລະ ພາສາສາກົນ;
2. ມີຕາປະທັບເປັນຂອງຕົນເອງ;
3. ຄັດເລືອກບົດທີ່ຈະນຳມາແປ;

4. ພົວພັນ ຫລື ຂໍ ແລະ ຊື້ລິຂະສິດຂອງຄົນອື່ນມາແປ;
5. ປົກປ້ອງ, ພິມໂຄສະນາ ເຜີຍແຜ່ ຫລື ພິມຈຳໜ່າຍ ບົດແປ;
6. ກວດກາ, ຢັ້ງຢືນ, ລົງລາຍເຊັນ ແລະ ປະທັບຕາໃສ່ບົດແປ ຂອງຕົນ ແລະ ຂອງນັກບໍລິການແປພາສາອິດສະລະ ທີ່ຢູ່ໃນບັນຊີສະມາຊິກນັກບໍລິການແປພາສາບໍ່ປະຈຳ ຂອງຕົນ;
7. ພົວພັນ, ປະສານງານກັບອົງການຄຸ້ມຄອງການພິມຈຳໜ່າຍ, ອົງການຈັດຕັ້ງປະຕິບັດວຽກງານທະບຽນສານ, ສຳນັກພິມ, ໂຮງພິມ ແລະ ສຳນັກງານອື່ນທີ່ກ່ຽວຂ້ອງ;
8. ຂະຫຍາຍສາຂາບໍລິສັດບໍລິການແປພາສາຢູ່ ແຂວງ ແລະ ເມືອງ;
9. ຮັບເອົານັກບໍລິການແປພາສາອິດສະລະເຂົ້າຢູ່ໃນບັນຊີນັກບໍລິການແປພາສາອິດສະລະຂອງບໍລິສັດຕົນ;
10. ຄຸ້ມຄອງການເຄື່ອນໄຫວບໍລິການແປພາສາຂອງນັກບໍລິການແປພາສາອິດສະລະ;
11. ເກັບຄ່າກວດແກ້, ຮຽບຮຽງ, ຢັ້ງຢືນບົດແປ ທີ່ນັກບໍລິການແປພາສາອິດສະລະ ຕາມລະບຽບການ ;
12. ຊຸກຍູ້, ສົ່ງເສີມ, ຍົກລະດັບ ແລະ ຍ້ອງຍໍຊົມເຊີຍພະນັກງານ ແລະ ນັກບໍລິການແປພາສາອິດສະລະ ທີ່ສັງກັດໃນບັນຊີສະມາຊິກນັກບໍລິການແປພາສາອິດສະລະ ຂອງຕົນ;
13. ສະເໜີສ້າງຕັ້ງເປັນສຳນັກພິມ ຖ້າຫາກບໍລິສັດບໍລິການແປພາສານັ້ນ ມີນັກບັນນາທິການ ແລະ ນັກອອກແບບຈັດພິມຈຳໜ່າຍ ຄົບຖ້ວນ ແລະ ພຽງພໍ;
14. ສະເໜີຕໍ່ອົງການຄຸ້ມຄອງການພິມຈຳໜ່າຍທີ່ກ່ຽວຂ້ອງ ເພື່ອພິຈາລະນາ ກ່ຽວກັບການຢຸດເຊົາ ຫລື ໂຈະການບໍລິການແປພາສາ ຂອງສາຂາບໍລິສັດ ຂອງຕົນ;
15. ຮ່ວມລົງກວດກາ ການບໍລິການແປພາສາຂອງນັກບໍລິການແປພາສາອິດສະລະ ທີ່ບໍ່ປະຈຳ ເມື່ອຖືກເຊື້ອເຊີນ.

ມາດຕາ 17. ສິດຂອງໜ່ວຍງານແປພາສາ

ໜ່ວຍງານແປພາສາ ມີ ສິດ ດັ່ງນີ້:

1. ຄັດເລືອກບົດທີ່ຈະນຳມາແປ ໃນຂະແໜງວິຊາການຂອງຕົນ;
2. ພົວພັນ ຫລື ຂໍ ແລະ ຊື້ລິຂະສິດ ບົດວິຊາການທີ່ກ່ຽວຂ້ອງກັບຂະແໜງການຂອງຕົນຈາກພາກສ່ວນອື່ນ ຫລື ຈາກຄົນອື່ນ ມາແປ;
3. ປົກປ້ອງ, ໂຄສະນາ ເຜີຍແຜ່ບົດແປ, ຖ້າບົດແປບໍ່ແມ່ນບົດນິຕິກຳ ກ່ອນພິມ ເປັນເຫລັ້ມປຶ້ມ ແລະ ກ່ອນຈຳໜ່າຍ ຕ້ອງຜ່ານສຳນັກພິມ ເພື່ອກວດແກ້ ຢັ້ງຢືນເນື້ອໃນ ແລະ ນຳໄປຈົດທະບຽນພິມຈຳໜ່າຍກ່ອນ ຈຶ່ງພິມໂຄສະນາເຜີຍແຜ່ ຫລື ພິມຈຳໜ່າຍ;
4. ກວດກາ, ຢັ້ງຢືນບົດແປ ດ້ວຍການລົງລາຍເຊັນໃສ່ບົດແປ, ຖ້າຈະປະທັບຕາ ຕ້ອງແມ່ນຕາປະທັບຂອງສຳນັກງານ, ອົງການ ທີ່ໜ່ວຍງານແປພາສານັ້ນຂຶ້ນກັບ;
5. ພົວພັນ, ປະສານງານກັບອົງການຄຸ້ມຄອງການພິມຈຳໜ່າຍ, ອົງການຈັດຕັ້ງປະຕິບັດວຽກງານທະບຽນສານ, ສຳນັກພິມ, ໂຮງພິມ ແລະ ສຳນັກງານອື່ນທີ່ມີສ່ວນກ່ຽວຂ້ອງ;

6. ສະເໜີສ້າງຕັ້ງເປັນສຳນັກພິມ ປະຈຳສຳນັກງານ, ອົງການທີ່ຂຶ້ນກັບ ຖ້າຫາກມີເງື່ອນໄຂຄົບຖ້ວນ ເຊັ່ນ : ໜ່ວຍງານແປພາສາຂອງຂະແໜງການກະສິກຳ ແລະ ປ່າໄມ້ ສາມາດສະເໜີສ້າງຕັ້ງເປັນສຳນັກພິມຂອງຂະແໜງການກະສິກຳ ແລະ ປ່າໄມ້;
7. ສະເໜີຕໍ່ຫົວໜ້າອົງການ ຫລື ສຳນັກງານທີ່ຕົນຂຶ້ນກັບ ເພື່ອຍົກລະດັບຄວາມຮູ້ຄວາມສາມາດດ້ານການແປພາສາ ແລະ ຍ້ອງຍໍຊົມເຊີຍເພື່ອນຮ່ວມງານ ທີ່ມີຜົນງານ ດີເດັ່ນ;
8. ສະເໜີຕໍ່ຂະແໜງການທີ່ຕົນຂຶ້ນກັບ ເພື່ອພິຈາລະນາກ່ຽວກັບການຢຸດເຊົາ ຫລື ໂຈະການບໍລິການແປພາສາ ແລ້ວຂະແໜງການດັ່ງກ່າວ ຈຶ່ງລາຍງານຕໍ່ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນສູນກາງ ເພື່ອລົບບັນຊີລາຍຊື່ ຫລື ເລກລະຫັດອອກຈາກບັນຊີລວມ.

## ມາດຕາ 18. ສິດຂອງນັກບໍລິການແປພາສາອິດສະລະ

ນັກບໍລິການແປພາສາອິດສະລະ ມີ ສິດ ດັ່ງນີ້:

1. ຄັດເລືອກປຶ້ມທີ່ຈະນຳມາແປ;
2. ພົວພັນ ຫລື ຂໍ ແລະ ຊື້ລິຂະສິດຂອງຄົນອື່ນ ມາແປ;
3. ປົກປ້ອງ, ຈັດພິມຈຳໜ່າຍ, ເຜີຍແຜ່ ປຶ້ມແປ, ຖ້າປຶ້ມແປບໍ່ແມ່ນປຶ້ມນິຕິກຳ ກ່ອນພິມໂຄສະນາເຜີຍແຜ່ ຫລື ກ່ອນພິມຈຳໜ່າຍ ຕ້ອງຜ່ານການຢັ້ງຢືນຈາກບໍລິສັດທີ່ຕົນເປັນສະມາຊິກ ພ້ອມທັງຜ່ານສຳນັກພິມ ເພື່ອກວດແກ້ ຢັ້ງຢືນເນື້ອໃນ ແລະ ນຳໄປຈົດທະບຽນພິມຈຳໜ່າຍນຳອົງການຄຸ້ມຄອງການພິມຈຳໜ່າຍ, ຖ້າແມ່ນປຶ້ມແປດ້ານນິຕິກຳ ກໍຕ້ອງໄດ້ຢັ້ງຢືນຈາກບໍລິສັດ ທີ່ຕົນຂຶ້ນກັບກ່ອນ ແລ້ວຈຶ່ງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການຈັດຕັ້ງປະຕິບັດວຽກງານທະບຽນສານ;
4. ລົງລາຍເຊັນໃສ່ປຶ້ມແປ;
5. ພົວພັນ, ປະສານງານກັບບໍລິສັດບໍລິການແປພາສາທີ່ຕົນຂຶ້ນກັບ, ສຳນັກພິມ, ອົງການຄຸ້ມຄອງການພິມຈຳໜ່າຍ, ອົງການຈັດຕັ້ງປະຕິບັດວຽກງານທະບຽນສານ, ໂຮງພິມ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
6. ສະເໜີສ້າງຕັ້ງເປັນບໍລິສັດບໍລິການແປພາສາ ຖ້າຫາກມີເງື່ອນໄຂຄົບຖ້ວນ;
7. ສະເໜີ ຕໍ່ບໍລິສັດບໍລິການແປພາສາທີ່ຕົນຂຶ້ນກັບ ເພື່ອພິຈາລະນາ ກ່ຽວກັບການຢຸດເຊົາ ຫລື ໂຈະການບໍລິການແປພາສາ.

## ມາດຕາ 19. ໜ້າທີ່ຂອງບໍລິສັດບໍລິການແປພາສາ

ບໍລິສັດບໍລິການແປພາສາ ມີ ໜ້າທີ່ ດັ່ງນີ້:

1. ຮັບບໍລິການແປປຶ້ມວັນນະກຳ, ປຶ້ມເອກະສານຄວາມຮູ້ວິຊາການຕ່າງໆ ແລະ ເອກະສານດ້ານນິຕິກຳ;
2. ປັບປຸງ ແລະ ພັດທະນາການບໍລິການແປພາສາໃຫ້ມີຄຸນນະພາບ;
3. ດຳເນີນການບໍລິການແປພາສາ ພ້ອມທັງຈ່າຍ ຄ່າທຳນຽມ 200.000 ກີບ ແລະ ພາສີອາກອນທຸລະກິດ ຕາມລະບຽບການ;

4. ເຂົ້າຮ່ວມການປະຊຸມປະຈຳປີທີ່ອົງການຄຸ້ມຄອງການພິມຈຳໜ່າຍຈັດຂຶ້ນ;
5. ສ້າງລະບຽບຄຸ້ມຄອງບໍລິສັດຂອງຕົນ;
6. ສະຫລຸບ ລາຍງານ ສະພາບການບໍລິການແປພາສາ ແລະ ຈຳນວນນັກບໍລິການແປພາສາອິດສະລະທີ່ເປັນສະມາຊິກ ຂອງຕົນ ໃຫ້ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນແຂວງ ໃນແຕ່ລະປີ ຫລື ແຕ່ລະໄລຍະ.

### ມາດຕາ 20. ໜ້າທີ່ຂອງໜ່ວຍງານແປພາສາ

ໜ່ວຍງານແປພາສາ ມີ ໜ້າທີ່ ດັ່ງນີ້:

1. ຮັບບໍລິການແປບົດ ຫລື ເອກະສານຕ່າງໆທີ່ກ່ຽວຂ້ອງກັບວຽກງານຂະແໜງການຂອງຕົນລວມທັງເອກະສານດ້ານນິຕິກຳ;
2. ສະເໜີສຳນັກງານ, ຂະແໜງການທີ່ຕົນຂຶ້ນກັບ ເພື່ອປັບປຸງ ພັດທະນາໜ່ວຍງານແປພາສາ ໃຫ້ມີຄຸນນະພາບ;
3. ດຳເນີນການບໍລິການແປພາສາ ພ້ອມທັງຈ່າຍຄ່າທຳນຽມ 100.000 ກີບ/ປີ;
4. ເຂົ້າຮ່ວມການປະຊຸມປະຈຳປີທີ່ອົງການຄຸ້ມຄອງການພິມຈຳໜ່າຍຈັດຂຶ້ນ;
5. ສ້າງລະບຽບຄຸ້ມຄອງໜ່ວຍງານແປພາສາຂອງຕົນ;
6. ສະຫລຸບ ລາຍງານສະພາບການບໍລິການແປພາສາຂອງໜ່ວຍງານຕົນ ໃຫ້ອົງການຄຸ້ມຄອງການພິມຈຳໜ່າຍ ໃນແຕ່ລະປີ ຫລື ແຕ່ລະໄລຍະ.

### ມາດຕາ 21. ໜ້າທີ່ຂອງນັກບໍລິການແປພາສາອິດສະລະ

ນັກບໍລິການແປພາສາອິດສະລະ ມີ ໜ້າທີ່ ດັ່ງນີ້:

1. ຮັບບໍລິການແປບົດວັນນະກຳ, ບົດເອກະສານດ້ານຄວາມຮູ້ທົ່ວໄປ ແລະ ເອກະສານດ້ານນິຕິກຳ ໂດຍຜ່ານ ບໍລິສັດບໍລິການແປພາສາທີ່ຕົນຂຶ້ນກັບ;
2. ເຂົ້າຮ່ວມການປະຊຸມປະຈຳເດືອນ ຫລື ໄຕມາດ ນຳບໍລິສັດບໍລິການແປພາສາທີ່ຕົນຂຶ້ນກັບ ແລະ ກອງປະຊຸມປະຈຳປີທີ່ອົງການຄຸ້ມຄອງການພິມຈຳໜ່າຍ ຈັດຂຶ້ນ;
3. ດຳເນີນການບໍລິການແປພາສາ ພ້ອມທັງຈ່າຍຄ່າສະມາຊິກ ໃຫ້ບໍລິສັດທີ່ຕົນຂຶ້ນກັບໃນແຕ່ລະປີ ຕາມລະບຽບການ;
4. ນຳເອົາບົດແປຂອງຕົນໄປກວດກາເນື້ອໃນ ແລະ ຢັ້ງຢືນຄວາມຖືກຕ້ອງນຳ ບໍລິສັດບໍລິການແປພາສາທີ່ຕົນໄດ້ລົງຊື່ບັນຊີນັກບໍລິການແປພາສາອິດສະລະ ແລະ ຈ່າຍຄ່າທຳນຽມ 10.000 ກີບ/ໜ້າພິມເຈ້ຍ A4;
5. ປັບປຸງ ແລະ ພັດທະນາວຽກງານບໍລິການແປພາສາໃຫ້ກ້າວໜ້າເຂັ້ມແຂງ;
6. ສະຫລຸບ ລາຍງານ ສະພາບການ ບໍລິການແປພາສາ ໃຫ້ບໍລິສັດ ບໍລິການແປພາສາທີ່ຕົນຂຶ້ນກັບ ຢ່າງເປັນປົກກະຕິ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 22. ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ ແລະ ການຈັດຕັ້ງ ມີ ການກະທຳ ດັ່ງນີ້:

1. ແປບົດຂຽນ, ເອກະສານ, ປຶ້ມ, ສິ່ງພິມ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ;
2. ຈັດພິມ ແລະ ຈັດຈຳໜ່າຍບົດແປ, ປຶ້ມແປ, ສິ່ງພິມ ທີ່ແປຈາກພາສາຕ່າງປະເທດເປັນພາສາລາວ ໂດຍບໍ່ໄດ້ຮັບອະນຸຍາດ;
3. ແປປຶ້ມ, ເອກະສານ ຫລື ສິ່ງພິມພາສາລາວເປັນພາສາຕ່າງປະເທດ ທີ່ມີເນື້ອໃນຕ້ານ ສ.ປ.ປ.ລາວ, ມ້າງເພຄວາມສາມັກຄີຂອງປວງຊົນ,ກໍ່ຄວາມອາຄາດບາດໝາງລະຫວ່າງເຜົ່າ ແລະ ລະຫວ່າງຊາດ, ບິດເບືອນປະຫວັດສາດ, ປະຕິເສດຜົນສຳເລັດຂອງການປະຕິວັດ, ແຕະຕ້ອງກຽດສັກສີຂອງວິລະບູລຸດ, ວິລະຊົນຂອງຊາດ, ຂອງການຈັດຕັ້ງ ແລະ ກຽດສັກສີຂອງພົນລະເມືອງທົ່ວໄປ.

### ມາດຕາ 23. ຂໍ້ຫ້າມສຳລັບຜູ້ບໍລິການແປພາສາ

ຫ້າມຜູ້ບໍລິການແປພາສາ ມີການກະທຳ ດັ່ງນີ້:

1. ໃສ່ຊື່ ບໍລິສັດບໍລິການ, ໜ່ວຍງານແປພາສາ ບໍ່ສຸພາບ, ບໍ່ສົມຄວນ ແລະ ຊ້ຳຊ້ອນກັບຊື່ຂອງບໍລິສັດອື່ນ;
2. ນຳເອົາໃບອະນຸຍາດດຳເນີນການບໍລິການແປພາສາ ແລະ ບັດນັກບໍລິການແປພາສາອິດສະລະ ໃຫ້ບຸກຄົນອື່ນນຳໃຊ້ ຫລື ປ່ຽນແປງ, ປອມແປງໃບອະນຸຍາດດັ່ງກ່າວ ຢ່າງເດັດຂາດ. ຖ້າຫາກບັດ ແລະ ໃບອະນຸຍາດດຳເນີນການບໍລິການແປພາສາ ຕົກເຮ່ຍເສຍຫາຍ, ເປື້ອນ, ຈີກ ຂາດ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງການພິມຈຳໜ່າຍຢ່າງທັນການ;
3. ດຳເນີນການບໍລິການແປພາສາ ໂດຍ ບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງການພິມຈຳໜ່າຍ, ບໍ່ທັນໄດ້ຮັບການຈົດທະບຽນທຸລະກິດ, ບໍ່ທັນມີບັດສະມາຊິກນັກບໍລິການແປພາສາອິດສະລະ ແລະ ບໍ່ທັນປະຕິບັດພັນທະດ້ານ ພາສີ ອາກອນ ຕາມລະບຽບ ກົດໝາຍ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ການບໍລິການແປພາສາ

ມາດຕາ 24. ການຄຸ້ມຄອງ ແລະ ກວດກາບໍລິສັດ ບໍລິການແປພາສາ ແລະ ໜ່ວຍງານແປພາສາ

ບໍລິສັດບໍລິການແປພາສາ ແລະ ໜ່ວຍງານແປພາສາ ແມ່ນຢູ່ໃນການຄຸ້ມຄອງ, ການອະນຸຍາດ, ການຕິດຕາມ ແລະ ກວດກາ ຂອງ ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນສູນກາງ.

ມາດຕາ 25. ການຄຸ້ມຄອງ ແລະ ກວດກາ ສາຂາບໍລິສັດບໍລິການແປພາສາ

ສາຂາບໍລິສັດບໍລິການແປພາສາ ແມ່ນຢູ່ໃນການຄຸ້ມຄອງ, ການອະນຸຍາດ, ການຕິດຕາມ ແລະ ກວດກາ ຂອງອົງການຄຸ້ມຄອງການພິມຈຳໜ່າຍຂັ້ນທ້ອງຖິ່ນ ແຕ່ຕ້ອງລາຍງານ ໃຫ້ຂັ້ນເທິງຖັດຕົນ ຢ່າງເປັນລາຍລັກອັກສອນໃນແຕ່ລະໄລຍະ ຫລື ແຕ່ລະປີ.

ມາດຕາ 26. ການຄຸ້ມຄອງ ແລະ ກວດກາ ນັກບໍລິການແປພາສາອິດສະລະ

ອົງການຄຸ້ມຄອງການພິມຈຳໜ່າຍຂັ້ນເມືອງ ມີສິດອະນຸຍາດໃຫ້ນັກບໍລິການແປພາສາອິດສະລະ ທີ່ປະຈຳຢູ່ສາຂາບໍລິສັດບໍລິການແປພາສາທີ່ຕັ້ງຢູ່ເມືອງນັ້ນ ດຳເນີນການບໍລິການແປພາສາ ຕາມການສະເໜີຂອງຫົວໜ້າສາຂາບໍລິສັດບໍລິການແປພາສາ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 27. ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະລະ, ຜູ້ຄຸ້ມຄອງ ແລະ ກວດກາວຽກງານແປພາສາ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ມີບົດແປ, ການແປ, ການບໍລິຫານງານທີ່ດີເດັ່ນ ຫລື ໄດ້ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງວຽກງານການແປພາສາ, ການພິມຈຳໜ່າຍ ຈະໄດ້ຮັບການຍ້ອງຍໍ ເຊັ່ນ: ຫລຽນໄຊ, ຫລຽນກາ, ໃບຍ້ອງຍໍ, ນາມມະຍົດ ແລະ ນະໂຍບາຍອື່ນຕາມລະບຽບການ.

ມາດຕາ 28. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນມາດຕາ 22 ແລະ 23 ລວມທັງການຈັດຕັ້ງການບໍລິການແປພາສາທີ່ໄດ້ຮັບອະນຸຍາດສ້າງຕັ້ງແລ້ວ ແຕ່ຫາກບໍ່ດຳເນີນກິດຈະການພາຍໃນກຳນົດເວລາໜຶ່ງປີ ຈະຖືກປະຕິບັດມາດຕະການ ຕາມກໍລະນີ ເບົາ ຫລື ໜັກ ຄື: ສຶກສາອົບຮົມ, ປັບໃໝ, ໃຊ້ແທນທາງແພ່ງ ຫລື ຖືກດຳເນີນຄະດີທາງອາຍາ.

ມາດຕາ 29. ມາດຕະການສຶກສາອົບຮົມ

ບໍລິສັດບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະລະ ແລະ ອົງການຈັດຕັ້ງກ່ຽວກັບການບໍລິການແປພາສາ ທີ່ມີການລະເມີດຂໍ້ຕົກລົງສະບັບນີ້ ເປັນເທື່ອທຳອິດ ເຊັ່ນ: ແປຜິດ, ແປບໍ່ຖືກຕາມເນື້ອໃນເດີມເລັກໜ້ອຍ, ພິມຜິດເລັກໜ້ອຍ, ໃສ່ຮູບພາບຜິດພາດເລັກໜ້ອຍ, ແປ ແລະ ພິມໂຄສະນາເຜີຍແຜ່ ຫລື ພິມຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ, ແປໂດຍບໍ່ໄດ້ຢັ້ງຢືນຄວາມຖືກຕ້ອງຂອງບົດແປ ເທື່ອທຳອິດ ຈະຖືກແນະນຳ, ສຶກສາອົບຮົມ ກ່າວເຕືອນ ແລະ ເກັບຍຶດບົດແປ ໂດຍເຮັດບົດບັນທຶກຢ່າງຄັກແນ່.

ມາດຕາ 30. ມາດຕະການປັບໃໝ

ບຸກຄົນ, ບໍລິສັດບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະລະ ແລະ ອົງການຈັດຕັ້ງກ່ຽວກັບການບໍລິການແປພາສາ ທີ່ມີການລະເມີດຂໍ້ຕົກລົງສະບັບນີ້ ເປັນເທື່ອທີສອງ ເຊັ່ນ : ແປຜິດ, ແປບໍ່ຖືກຕາມເນື້ອໃນເດີມເລັກໜ້ອຍ, ພິມຜິດເລັກໜ້ອຍ, ໃສ່ຮູບພາບຜິດພາດເລັກໜ້ອຍ, ແປ ແລະ ພິມໂຄສະນາ ເຜີຍແຜ່ ຫລື ພິມຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ, ແປໂດຍບໍ່ໄດ້ຢັ້ງຢືນຄວາມຖືກຕ້ອງຂອງບົດແປ ເທື່ອທີສອງ ຈະຖືກປັບໃໝ 2 ເທົ່າ ຂອງມູນຄ່າບົດແປ ຫລື ການແປ.

ມາດຕາ 31. ມາດຕະການທາງແພ່ງ

ບຸກຄົນ, ບໍລິສັດບໍລິການແປພາສາ, ໜ່ວຍງານແປພາສາ, ນັກບໍລິການແປພາສາອິດສະລະ ແລະ ອົງການຈັດຕັ້ງກ່ຽວກັບການບໍລິການແປພາສາ ທີ່ມີການລະເມີດຂໍ້ຕົກລົງສະບັບນີ້ ເຊັ່ນ: ແປຜິດ, ແປບໍ່ຖືກຕາມເນື້ອໃນເດີມ, ແປໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຂອງເນື້ອໃນຈາກອົງການທີ່ກ່ຽວຂ້ອງ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜູ້ອື່ນ ຈະຖືກໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ຕົນໄດ້ກໍ່ຂຶ້ນ.

ມາດຕາ 32. ມາດຕາການທາງອາຍາ

ບຸກຄົນທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການລະເມີດຂໍ້ຫ້າມ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍອາຍາ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 33. ການປ່ຽນສະຖານທີ່ ຫລື ການຢຸດເຊົາ ການດໍາເນີນການບໍລິການແປພາສາ**

ໃນກໍລະນີທີ່ມີຄວາມຈໍາເປັນຕ້ອງປ່ຽນສະຖານທີ່ ຫລື ຢຸດເຊົາການດໍາເນີນການບໍລິການແປພາສາ ຕ້ອງເຮັດໜັງສືສະເໜີ ຕໍ່ອົງການຄຸ້ມຄອງການພິມຈໍາໜ່າຍ ກ່ອນຈະປ່ຽນສະຖານທີ່ ຫລື ຢຸດເຊົາການບໍລິການ ຢ່າງໜ້ອຍ 30 ວັນ.

**ມາດຕາ 34. ການຖອນ ຫລື ການລົບລ້າງໃບອະນຸຍາດດໍາເນີນການບໍລິການແປພາສາ**

ອົງການຄຸ້ມຄອງການພິມຈໍາໜ່າຍ ມີສິດ ຖອນ ຫລື ລົບລ້າງບັດ ຫລື ໃບອະນຸຍາດດໍາເນີນການບໍລິການແປພາສາ ຖ້າຫາກເຫັນວ່າ ບໍລິສັດບໍລິການ, ໜ່ວຍງານແປພາສາ ແລະ ນັກບໍລິການແປພາສາອິດສະລະ ມີການກະທໍາຜິດ ແລະ ຖືກປະຕິບັດມາດຕະການ ຕາມມາດຕາ 31 ແລະ 32 ຂອງຂໍ້ຕົກລົງສະບັບນີ້.

ບໍລິສັດບໍລິການແປພາສາ ມີສິດ ຖອນ ຫລື ລົບລ້າງ ບັດສະມາຊິກນັກບໍລິການແປພາສາອິດສະລະ ທີ່ຕົນໄດ້ຈົດບັນຊີລາຍຊື່ ແລະ ສະເໜີຕໍ່ອົງການຄຸ້ມຄອງການພິມຈໍາໜ່າຍ ຮັບຮູ້ ຢ່າງທັນການ.

**ມາດຕາ 35. ການຈັດຕັ້ງປະຕິບັດ**

ກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ, ກົມພິມຈໍາໜ່າຍ, ພະແນກຖະແຫລງຂ່າວ ແລະ ວັດທະນະທໍາແຂວງ, ນະຄອນ, ຫ້ອງການຖະແຫລງຂ່າວ ແລະ ວັດທະນະທໍາເມືອງ, ເທດສະບານ ມີໜ້າທີ່ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 36. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ແລະ ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ

ກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ